ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄະນະການນຳ ທະນາຄານແຫ່ງ ສປປ ລາວ ເຂົ້າອວຍພອນວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ (ວັນທີ 20 ມັງກອນ 1949 – 20 ມັງກອນ 2023).



ໃນຕອນບ່າຍວັນທີ 18 ມັງກອນ 2023 ທີ່ສະໂມສອນກະຊວງປ້ອງກັນປະເທດ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຄະນະອຳນວຍການ ທຄຕລ ພ້ອມດ້ວຍຄະນະໄດ້ເຂົ້າອວຍພອນຄະນະນຳກະຊວງປ້ອງກັນປະເທດ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ (ວັນທີ 20 ມັງກອນ 1949 – 20 ມັງກອນ 2023) ໂດຍການໃຫ້ກຽດຕ້ອນຮັບຂອງທ່ານ ພົທ ຄຳລຽງ ອຸທະໄກສອນ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫ່ຍເສນາທິການກອງທັບ ພ້ອມດ້ວຍຄະນະ.

ໃນການພົບປະຄັ້ງນີ້, ທ່ານຜູ້ວ່າການ ທຫລ ໄດ້ກ່າວສະແດງຄວາມຮູ້ບຸນຄຸນຕໍ່ກອງທັບປະຊາຊົນລາວ ທີ່ໄດ້ປະຕິ ບັດໜ້າທີ່ໃນການຕໍ່ສູ້ປົດປ່ອຍ ແລະ ປົກປັກຮັກສາປະເທດຊາດ ຈົນມີການເຕີບໃຫຍ່ເຂັ້ມແຂງໃນປັດຈຸບັນ ພ້ອມທັງກ່າວອວຍພອນຄະນະນຳຕະຫຼອດຮອດນາຍ ແລະ ພົນທະຫານ ໃນຂອບເຂດທົ່ວປະເທດ ພ້ອມນີ້, ທ່ານ ພົທ ຄຳລຽງ ອຸທະໄກສອນ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫ່ຍເສນາທິການກອງທັບ ກໍ່ໄດ້ກ່າວຄວາມຂອບໃຈເປັນຢ່າງສູງ ທີ່ຂະແໜງການທະນາຄານ ເຫັນໄດ້ຄວາມສຳຄັນ ແລະ ໃຫ້ການສະໜັບສະໜູນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໂດຍດີຕະຫຼອດມາ ນັບແຕ່ສະໄໝຕໍ່ສູ້ປົດປ່ອຍປະເທດຊາດ ກໍ່ຄືໄລຍະສ້າງສາປະເທດຊາດ, ຊຶ່ງທາງກອງທັບຈະສືບຕໍ່ປະຕິບັດໜ້າທີ່ຂອງຕົນຢ່າງຕັ້ງໜ້າ ແລະ ຈະສຸມໃສ່ທຸກກຳລັງແຮງໃນການພັດທະນາກອງທັບປະຊາຊົນ

ລາວ ໃຫ້ນັບມື້ເຕີບໃຫຍ່ເຂັ້ມແຂງ ເພື່ອປົກປ້ອງອະທິປະໄຕ, ລະບອບການປົກຄອງຂອງຊາດໃຫ້ມີສະ ຖຽນລະພາບ ແລະ ໝັ້ນຄົງ.



ໂດຍ: ທ ສົມພິດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*